ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 1249 /ກສ

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2025

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ແນໃສ່ຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ຂຽນເປັນຕົວອັກສອນຫຍໍ້ວ່າ "**ກພຫ**" ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງມະຫາພາກວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ເປັນໃຈກາງປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຂອງສູນກາງ ແລະ ທ້ອງຖິ່ນ ໃນການເສີມສ້າງຄວາມເຂັ້ມແຂງລະບົບການປົກປ້ອງທາງສັງຄົມ, ພັດທະນາພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ການດຳລົງຊີວິດ ຂອງປະຊາຊົນໃນເຂດຊົນນະບົດ; ພັດທະນາອາຊີບ, ປັບປຸງລະບົບການຈັດຕັ້ງການຜະລິດ, ການພັດທະນາຊົນນະບົດຮອບດ້ານ ແລະ ການແກ້ໄຂຄວາມທຸກຍາກ ຕາມບົດບາດ ຂອງຂະແໜງການ; ຄົ້ນຄວ້າກຳນົດມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ, ຕົວຊີ້ວັດແຫ່ງຊາດ ກ່ຽວກັບການພັດທະນາຊົນນະບົດໃໝ່ ຕາມທິດ 03 ສ້າງ ພ້ອມທັງກຳນົດ ແລະ ປະເມີນຜົນບັນດາເປົ້າໝາຍ, ຄາດໝາຍສູ້ຊົນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເປັນແຕ່ລະໄລຍະ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດ

**ມາດຕາ 3 ໜ້າທີ່**

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນ ຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ຄົ້ນຄວ້າ, ເຊື່ອມຊຶມ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະ ຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ; ຄົ້ນຄວ້າ, ສ້າງ (ຮ່າງ) ຍຸດທະສາດ ແລະ ນະໂຍບາຍ ກ່ຽວກັບການຄຸ້ມຄອງ ຊຸກຍູ້ສົ່ງເສີມ, ພັດທະນາ ແລະ ກວດກາ ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມທິດ 03 ສ້າງ ເພື່ອສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາ ຮັບຮອງ; ຄົ້ນຄວ້າສ້າງ, ປັບປຸງ, ໂຄສະນາເຜີຍແຜ່ ແລະ ກວດກາປະເມີນຜົນການຈັດຕັ້ງປະຕິບັດບັນດາ ກົດໝາຍ, ນິຕິກຳລຸ່ມກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ແຜນງານ ແລະ ໂຄງການ ຂອງຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ;
3. ສຸມທຸກກຳລັງແຮງ ເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອປະກອບສ່ວນຊຸກຍູ້ການຜະລິດສະບຽງອາຫານໃຫ້ພຽງພໍ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ມີວັດຖຸດິບປ້ອນໂຮງງານປຸງແຕ່ງ, ມີຜົນຜະລິດ ສົດ, ສະອາດ ແລະ ປອດໄພ ເພື່ອຊົມໃຊ້ພາຍໃນ ປ່ຽນແທນການນຳເຂົ້າ ແລະ ຜະລິດສິນຄ້າສົ່ງອອກ;
4. ເປັນໃຈກາງສັງລວມ ແລະ ສ້າງເປັນແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບການພັດທະນາຊົນນະບົດຮອບດ້ານລະດັບຊາດ ແລະ ວຽກງານແກ້ໄຂຄວາມທຸກຍາກ ໃນຂອບເຂດທົ່ວປະເທດ; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ສ້າງແຜນການ ແລະ ໂຄງການ ເພື່ອພັດທະນາພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ການດຳລົງຊີວິດຂອງປະຊາຊົນໃນເຂດຊົນນະບົດ ຕາມພາລະບົດບາດ ແລະ ໜ້າທີ່ ຂອງຂະແໜງການ ແລະ ທ້ອງຖິ່ນ; ສ້າງແຜນການ ແລະ ໂຄງການ ພັດທະນາອາຊີບ ແລະ ປັບປຸງລະບົບການຈັດຕັ້ງການຜະລິດໃນຊົນນະບົດ ເພື່ອສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາ ພ້ອມທັງເປັນໃຈກາງຄຸ້ມຄອງ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
5. ຄົ້ນຄວ້າ, ສັງລວມ, ວິເຄາະ ວິໄຈຂໍ້ມູນ ແລະ ເນື້ອໃນ ເອກະສານຕ່າງໆ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນແຕ່ລະໄລຍະ;
6. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂອງຫ້ອງວ່າການສູນກາງພັກ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກຳມາທິການທີ່ກ່ຽວຂ້ອງ ຂອງສະພາແຫ່ງຊາດ, ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
7. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເກັບກຳ ແລະ ສ້າງລະບົບຖານຂໍ້ມູນ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອນຳໃຊ້ເຂົ້າໃນການຕິດຕາມ, ກວດກາ ແລະ ປະເມີນ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ໄປຕາມແຜນການທີ່ວາງໄວ້ໃນແຕ່ລະໄລຍະ;
8. ເປັນໃຈກາງ ປະສານສົມທົບ, ສ້າງເງື່ອນໄຂສະດວກ ແລະ ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອແນະນຳທາງດ້ານວິຊາການ ໃນການຄຸ້ມຄອງ, ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ ຢ່າງມີປະສິດທິພາບ ພ້ອມທັງ

ເກັບກຳຂໍ້ມູນ ແລະ ສະພາບການຕ່າງໆ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອສັງລວມລາຍງານຄະນະກົມ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ ຢ່າງຖືກຕ້ອງ ແລະ ທັນສະພາບການ;

9. ຄົ້ນຄວ້າ, ກຳນົດ ມາດຕະຖານ ພົ້ນທຸກ ແລະ ພັດທະນາ (ມາດຕະຖານຄອບຄົວພົ້ນທຸກ ແລະ ຄອບຄົວພັດທະນາ, ມາດຕະຖານບ້ານພົ້ນທຸກ ແລະ ບ້ານພັດທະນາ, ມາດຕະຖານບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ມາດຕະຖານເມືອງພົ້ນທຸກ ແລະ ມາດຕະຖານເມືອງເຂັ້ມແຂງຮອບດ້ານ) ແລະ ຕົວຊີ້ວັດແຫ່ງຊາດ ກ່ຽວກັບວຽກງານພັດທະນາຊົນນະບົດໃໝ່ ຕາມທິດ 03 ສ້າງ ພ້ອມທັງຈັດຕັ້ງການປະເມີນການພົ້ນທຸກ ແລະ ພັດທະນາ ຕາມມາດຕະຖານທີ່ກຳນົດເປັນແຕ່ລະໄລຍະ ເພື່ອລາຍງານລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນານຳສະເໜີລັດຖະບານ ອະນຸມັດຮັບຮອງ;

10. ຄົ້ນຄວ້າ, ກຳນົດ ຈຸດສຸມພັດທະນາຊົນນະບົດໃໝ່ ທີ່ເປັນບູລິມະສິດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ເພື່ອສ້າງເປັນຕົວແບບພັດທະນາໃນແຕ່ລະໄລຍະ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ເປັນຕົ້ນ ຈຸດສຸມສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ, ການສ້າງບ້ານພັດທະນາ ແລະ ຈຸດສຸມອື່ນໆ ເພື່ອນຳສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນານຳສະເໜີລັດຖະບານ ອະນຸມັດຮັບຮອງ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂອງສູນກາງ ແລະ ທ້ອງຖິ່ນ ຄົ້ນຄວ້າ, ສ້າງເປັນແຜນການ, ແຜນງານ ແລະ ໂຄງການພັດທະນາຈຸດສຸມດັ່ງກ່າວ ຕາມທ່າແຮງເງື່ອນໄຂ ຂອງແຕ່ລະທ້ອງຖິ່ນ ເພື່ອນຳສະເໜີຕໍ່ຄະນະຮັບຜິດຊອບ ຕາມຂັ້ນຄຸ້ມຄອງພິຈາລະນາ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ແລະ ສັງລວມລາຍງານ ກ່ຽວກັບການຈັດຕັ້ງປະຕິບັດໃຫ້ຂັ້ນເທິງ ຊາບ ແລະ ໃຫ້ທິດຊີ້ນຳ ເປັນແຕ່ລະໄລຍະ;

11. ຄົ້ນຄວ້າ, ກຳນົດຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ ທີ່ເປັນບູລິມະສິດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ (ຈຸດສຸມປະເພດທົ່ວໄປ ແລະ ຈຸດສຸມປະເພດສະເພາະ) ໃນແຕ່ລະໄລຍະ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອນຳສະເໜີຕໍ່ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນານຳສະເໜີລັດຖະບານ ອະນຸມັດຮັບຮອງ; ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂອງສູນກາງ ແລະ ທ້ອງຖິ່ນ ຄົ້ນຄວ້າສ້າງເປັນແຜນການ, ແຜນງານ ແລະ ໂຄງການ ພັດທະນາຈຸດສຸມດັ່ງກ່າວ ຕາມທ່າແຮງເງື່ອນໄຂ ຂອງແຕ່ລະທ້ອງຖິ່ນ ເພື່ອນຳສະເໜີຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ ຕາມຂັ້ນຄຸ້ມຄອງພິຈາລະນາ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ແລະ ສັງລວມລາຍງານ ກ່ຽວກັບການຈັດຕັ້ງປະຕິບັດໃຫ້ຂັ້ນເທິງ ຊາບ ແລະ ໃຫ້ທິດຊີ້ນຳ ເປັນແຕ່ລະໄລຍະ;

12. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂອງສູນກາງ ແລະ ທ້ອງຖິ່ນ ເພື່ອຄົ້ນຄວ້າ, ກຳນົດບັນດາເປົ້າໝາຍຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ເພື່ອກະກຽມໂຄງການ, ຈັດລຽງ ແລະ ສ້າງເປັນແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳຂອງໂຄງການຍ່ອຍ ເຂົ້າແຜນລົງທຶນຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການວາງອອກ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ແລະ ສັງລວມລາຍງານ ກ່ຽວກັບການຈັດຕັ້ງປະຕິບັດໃຫ້ຂັ້ນເທິງ ຊາບ ແລະ ໃຫ້ທິດຊີ້ນຳ ເປັນແຕ່ລະໄລຍະ;

13. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂອງບັນດາກະຊວງ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງອ້ອມຂ້າງກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາຊົນນະບົດຮອບດ້ານ ແລະ ແກ້ໄຂຄວາມທຸກຍາກ ໃນທົ່ວປະເທດ ຕາມພາລະບົດບາດ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ລວມທັງພັດທະນາພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ການດຳລົງຊີວິດ ຂອງປະຊາຊົນໃນເຂດຊົນນະບົດ, ພັດທະນາອາຊີບ ແລະ ປັບປຸງລະບົບການຈັດຕັ້ງການຜະລິດ ເພື່ອສ້າງລາຍຮັບ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກໃຫ້ແກ່ປະຊາຊົນຢູ່ຊົນນະບົດ, ຈັດສັນພູມລຳເນົາ ແລະ ອາຊີບ, ກອງທຶນຫຼຸດຜ່ອນຄວາມທຸກຍາກ, ກອງທຶນພັດທະນາຂັ້ນບ້ານຢູ່ເມືອງບໍ່ພົ້ນທຸກ ເພື່ອສົ່ງເສີມການຈັດຕັ້ງການຜະລິດ ແລະ ສ້າງໂອກາດໃຫ້ ແມ່ຍິງ-ເດັກນ້ອຍ ເຂດຊົນນະບົດ;

14. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ຈັດລຽງບຸລິມະສິດ, ຈັດສັນແຫຼ່ງທຶນຕ່າງໆ ແລະ ດັດແກ້ໂຄງການລົງທຶນຂອງລັດ ທີ່ຕິດພັນກັບວຽກງານພັດທະນາຊົນນະບົດ, ການພັດທະນາໂຄງລ່າງພື້ນຖານໃນເຂດຊົນນະບົດ, ພັດທະນາອາຊີບ ແລະ ປັບປຸງລະບົບການຈັດຕັ້ງການຜະລິດ, ການສ້າງລາຍຮັບປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກໃຫ້ແກ່ປະຊາຊົນຢູ່ຊົນນະບົດ ທັງໃນເຂດຈຸດສຸມ ແລະ ນອກຈຸດສຸມ ໃຫ້ເປັນເອກະພາບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ພ້ອມທັງຄຸ້ມຄອງ, ຕິດຕາມ, ຊຸກຍູ້, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດໃຫ້ຂັ້ນເທິງຊາບ ແລະ ໃຫ້ທິດຊີ້ນໍາ ເປັນແຕ່ລະໄລຍະ;

15. ສ້າງ, ພັດທະນາ, ຄຸ້ມຄອງ ເຊື່ອມໂຍງລະບົບຖານຂໍ້ມູນ; ສະໜອງ, ນໍາໃຊ້ ແລະ ເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ຖືກຕ້ອງ, ຄົບຖ້ວນ, ເຂົ້າເຖິງສະດວກ, ທົ່ວເຖິງ ແລະ ວ່ອງໄວທັນການ;

16. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ, ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ, ໂຄງການກູ້ຢືມຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ໂຄງການອື່ນໆ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄປຕາມວຽກຈຸດສຸມຂອງກະຊວງ ແລະ ລັດຖະບານ ຕາມຂັ້ນຄຸ້ມຄອງ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ; ມີການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ມີຜົນສໍາເລັດ;

17. ສັງລວມ, ເກັບກໍາຂໍ້ມູນ ພ້ອມທັງຈັດສັນພູມລໍາເນົາ, ບ່ອນທໍາມາຫາກິນຖາວອນ ແລະ ອາຊີບໝັ້ນຄົງ ໃຫ້ປະຊາຊົນໃນເຂດເປົ້າໝາຍຍົກຍ້າຍ ແລະ ເຂດແກ້ໄຂບັນຫາການເຄື່ອນຍ້າຍ ຂອງພົນລະເມືອງແບບຊະຊາຍ, ດຸ່ນດ່ຽງປະຊາກອນ ຫຼື ກໍາລັງແຮງງານກັບພື້ນທີ່ ຕາມຂັ້ນຕອນການຈັດສັນພູມລໍາເນົາ ແລະ ອາ ຊີບ ທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

18. ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ທັງພາກລັດ ແລະ ຜູ້ປະກອບການ ເພື່ອຊຸກຍູ້, ສົ່ງເສີມສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃນການຜະລິດເປັນສິນຄ້າ, ການເຂົ້າເຖິງແຫຼ່ງທຶນ, ການເຂົ້າເຖິງຕະຫຼາດ, ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ໃຫ້ປະຊາຊົນໃນການພັດທະນາອາຊີບ, ປັບປຸງລະບົບການຈັດຕັ້ງການຜະລິດ, ສົ່ງເສີມ ແລະ ສ້າງໂອກາດໃຫ້ ແມ່ຍິງ-ເດັກນ້ອຍ ເຂດຊົນນະບົດ, ຈຸດສຸມຊົນນະບົດໃໝ່, ຈັດສັນພູມລໍາເນົາ ແລະ ອາຊີບ, ສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ແລະ ຈຸດສຸມອື່ນໆ;

19. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກອງທຶນພັດທະນາຂັ້ນບ້ານຢູ່ເມືອງບໍ່ພົ້ນທຸກ (ບ້ວງ 500 ລ້ານກີບ) ໃຫ້ເຄື່ອນໄຫວໄປຕາມກົດໝາຍ ແລະ ລະບຽບການ ພ້ອມທັງສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ແຕ່ລະໄລຍະ ຢ່າງເປັນປົກກະຕິ;

20. ພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ ກອບການຮ່ວມມື ສອງຝ່າຍ, ຫຼາຍຝ່າຍ, ອາຊຽນ, ການຮ່ວມມືແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ, ຂະບວນການກອງປະຊຸມໂຕະມົນ, ຜູ້ປະກອບການ ແລະ ອື່ນໆ ເພື່ອໃຫ້ໄດ້ການຊ່ວຍເຫຼືອດ້ານທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ບັນລຸຄາດໝາຍທີ່ວາງໄວ້ ໃນແຕ່ລະໄລຍະ;

21. ເຂົ້າຮ່ວມປະຊຸມ, ສໍາມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ພະນັກງານຂະແໜງພັດທະນາຊົນນະບົດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ກໍຄືນັກພັດທະນາກອນ ເພື່ອຮຽນຮູ້ ແລະ ນໍາພາປະຊາຊົນເຮັດຕົວຈິງ ຢູ່ທ້ອງຖິ່ນ ແລະ ບັນດາຈຸດສຸມ ໃນຂະບວນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍຕິດພັນສະໜິດແໜ້ນກັບຂະບວນການຜະລິດເປັນສິນຄ້າ ເພື່ອສ້າງອາຊີບ ແລະ ສ້າງລາຍຮັບ ທີ່ໝັ້ນຄົງ;

22. ເປັນກອງເລຂາຄະນະພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ກອງເລຂາຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ, ຈຸດປະສານງານວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກອາຊຽນ ແລະ ປະທານຂະແໜງການຍ່ອຍພັດທະນາຊົນນະບົດ;

23. ຄົ້ນຄວ້າ, ນຳສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ຄຸ້ມຄອງພະນັກງານ-ລັດຖະກອນ ແລະ ສ້າງແຜນການບຳລຸງກໍ່ສ້າງພະນັກງານ-ລັດຖະກອນຂອງຕົນ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ ໂດຍປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້; ປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງບໍລິຫານຂອງກົມ ໃຫ້ມີປະສິດທິພາບ;

24. ຄຸ້ມຄອງ, ບໍລິຫານ-ການເງິນ ແລະ ຊັບສິນ ຂອງກົມ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບສັງລວມ ຕາມກົດໝາຍ ແລະ ລະບຽບການ;

25. ປະກອບສ່ວນເຂົ້າໃນການພັດທະນາບັນດາວິທະຍາໄລກະສິກຳ ແລະ ສິ່ງແວດລ້ອມ ແລະ ໂຮງຮຽນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃຫ້ມີຄວາມເຂັ້ມແຂງ; ຫັນກິດຈະກຳໂຄງການ, ງົບປະມານ, ເຕັກນິກວິຊາການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ລົງສູ່ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະກອບສ່ວນສ້າງສູນ, ສະຖານີ ດັ່ງກ່າວໃຫ້ມີຄວາມເຂັ້ມແຂງ;

26. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສະຫຼຸບລາຍງານ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ປະຈຳປີ ກາງສະໄໝ ແລະ 5 ປີ ຂອງກົມ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;

27. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

**ມາດຕາ 4 ຂອບເຂດສິດ**

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ມີສິດ ດັ່ງນີ້:

1. ນຳສະເໜີ ຮ່າງຍຸດທະສາດ, ແຜນງານ, ແຜນການ, ໂຄງການ ຈັດຕັ້ງປະຕິບັດວາລະແຫ່ງຊາດ ຂອງກົມ ແລະ ຂະແໜງການ; ນຳສະເໜີມາດຕະຖານ ແລະ ຕົວຊີ້ວັດແຫ່ງຊາດ ກ່ຽວກັບວຽກງານພັດທະນາຊົນນະບົດໃໝ່, ຈຸດສຸມພັດທະນາທີ່ເປັນບຸລິມະສິດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ (ຈຸດສຸມພັດທະນາຊົນນະບົດໃໝ່ ເພື່ອສ້າງເປັນຕົວແບບພັດທະນາ, ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ), ວຽກງານກອງທຶນຫຼຸດຜ່ອນຄວາມທຸກຍາກ ໃນແຕ່ລະໄລຍະ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ລັດຖະບານ ພິຈາລະນາ;

2. ນຳສະເໜີຜົນການປະເມີນການພົ້ນທຸກ ແລະ ພັດທະນາ ຕາມມາດຕະຖານທີ່ກຳນົດໄວ້ ແລະ ຂໍ້ມູນຕ່າງໆ ກ່ຽວກັບວຽກງານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ລັດຖະບານ ພິຈາລະນາຮັບຮອງ;

3. ອອກຂໍ້ຕົກລົງ, ແຈ້ງການ, ຄຳແນະນຳ, ຄູ່ມືວິຊາການ, ໜັງສືສະເໜີເຖິງຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ ແລະ ຂະແໜງສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ໄດ້ຮັບຜົນສຳເລັດຕາມ ຄາດໝາຍທີ່ວາງໄວ້ ພ້ອມທັງຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

4. ຊີ້ນຳ, ຄຸ້ມຄອງ ດ້ານເຕັກນິກ, ວິຊາການ ຕາມການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດຕາມສາຍຕັ້ງ ໃນການຕົກລົງບັນຫາ ຢ່າງຈະແຈ້ງ ຕາມລະບຽບການ ແລະ ກົດໝາຍ ວາງອອກ;

5. ສະເໜີລັດຖະມົນຕີ ກ່ຽວກັບ ການປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ, ການກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ, ຈັດວາງ, ແຕ່ງຕັ້ງ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທົ່ວກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ຕາມການແບ່ງຂັ້ນຄຸ້ມຄອງ, ກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;

6. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການ ຂອງຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສອງແສງວຽກງານເປັນແຕ່ລະໄລຍະ, ຈັດຕັ້ງກອງປະຊຸມ, ສຳມະນາວິຊາການ, ຝຶກອົບຮົມ ແລະ ແລກປ່ຽນຖອດຖອນບົດຮຽນ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານຕົວຈິງ;
7. ພົວພັນປະສານງານ, ເຂົ້າຮ່ວມກອງປະຊຸມ, ສຳມະນາ, ປຶກສາຫາລື, ເຈລະຈາ, ເຊັນສັນຍາ ແລະ ເຊັນບົດບັນທຶກກັບອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ ຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ;
8. ຄຸ້ມຄອງ ແລະ ນຳໃຊ້ ງົບປະມານ, ຊັບສິນ ຂອງລັດ, ການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບ ຂອງກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້;
9. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກສັງລວມ;
2. ພະແນກຮ່ວມມື;
3. ພະແນກພັດທະນາຊົນນະບົດ;
4. ພະແນກແກ້ໄຂຄວາມທຸກຍາກ;
5. ພະແນກຈັດສັນພູມລຳເນົາ ແລະ ອາຊີບ;
6. ພະແນກມາດຕະຖານ ແລະ ປະເມີນຜົນ;

ນອກຈາກນີ້, ຍັງມີກອງທຶນຫຼຸດຜ່ອນຄວາມທຸກຍາກ ຊຶ່ງເປັນຫົວໜ່ວຍວິຊາການລະດັບສອງ ເຄື່ອນໄຫວຕາມດຳລັດ ວ່າດ້ວຍກອງທຶນຫຼຸດຜ່ອນຄວາມທຸກຍາກ ຊຶ່ງມີຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສະເພາະ, ມີສະພາບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ ເປັນຜູ້ຊີ້ນຳໂດຍກົງ ຊຶ່ງປະກອບມີ ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນປະທານສະພາບໍລິຫານ ແລະ ມີຫ້ອງການອຳນວຍການບໍລິຫານ ເປັນເສນາທິການ; ອຳນວຍການກອງທຶນ ມີຕຳແໜ່ງບໍລິຫານ ປະເພດ 3 ແລະ ຮອງອຳນວຍການ ຈຳນວນໜຶ່ງ ມີຕຳແໜ່ງບໍລິຫານ ປະເພດ 4.

### ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ມີໂຄງປະກອບດ້ານບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ, ຮັບຜິດຊອບຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການປະຕິບັດວຽກງານ ຂອງຕົນ;

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດທ່ານໜຶ່ງ ຮັກສາການແທນ.

2. ຮອງຫົວໜ້າກົມຈຳນວນໜຶ່ງ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ເປັນລາຍລັກອັກສອນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດ ຕາມລະບຽບການ ແລະ ກົດໝາຍ.

## ໝວດທີ 4
## ໜ້າທີ່ ຂອງບັນດາພະແນກ

### ມາດຕາ 7 ໜ້າທີ່ ຂອງພະແນກສັງລວມ

ພະແນກສັງລວມ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະ ຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ກວດກາ ເນື້ອໃນ ຂອງບັນດານິຕິກຳ ໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ເຕັກນິກການສ້າງນິຕິກຳ ກ່ອນນຳສະເໜີຕໍ່ຄະນະກົມ ເພື່ອຄົ້ນຄວ້າ ພິຈາລະນາ ນຳສະເໜີຂັ້ນເທິງ ຢ່າງເປັນທາງການ ພ້ອມທັງສັງລວມແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ຍຸດທະສາດ ແລະ ເອກະສານອື່ນໆ ປະຈຳ 6 ເດືອນ ແລະ ປະຈຳປີ ເພື່ອລາຍງານຄະນະກົມ ເປັນແຕ່ລະໄລຍະ;
3. ຄົ້ນຄວ້າ, ກັ່ນກອງ ແລະ ກວດກາ ຄວາມຖືກຕ້ອງຂອງຂໍ້ມູນ; ລາຍງານ ສະພາບພົ້ນເດັ່ນ, ສະພາບການເຄື່ອນໄຫວຕ່າງໆ ຂອງວຽກງານພັດທະນາຊົນນະບົດ ແລະ ສິ່ງແວດລ້ອມ ຢ່າງເປັນທາງການຕໍ່ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ໃນແຕ່ລະໄລຍະ ແລະ ທັນສະພາບການ;
4. ຄົ້ນຄວ້າ, ຕິດຕາມ ແລະ ຊຸກຍູ້ ຜົນຂອງການຈັດຕັ້ງປະຕິບັດ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳແຈ້ງການ ຂອງຂັ້ນເທິງ ແລະ ການຊີ້ນຳຂອງຄະນະກົມ ຕໍ່ບັນດາພະແນກ, ໂຄງການ, ກອງທຶນຫຼຸດຜ່ອນຄວາມທຸກຍາກ, ຂະແໜງພັດທະນາຊົນນະບົດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ເພື່ອລາຍງານຄະນະກົມ ຢ່າງທັນການ;
5. ເປັນໃຈກາງປະສານງານກັບບັນດາພະແນກ, ໂຄງການ, ກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ພາກ ສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສັງລວມບັນດາຄຳຊີ້ແຈງ, ແຈ້ງຕອບຄຳຊັກຖາມ ຈາກສະພາແຫ່ງຊາດ, ຫ້ອງວ່າການຈັດຕັ້ງສູນກາງພັກ, ຫ້ອງວ່າ ການສຳນັກງານນາຍົກລັດຖະມົນຕີ ແລະ ພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ;
6. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂອງບັນດາກະຊວງ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາຊົນ ນະບົດຮອບດ້ານ ຕາມພາລະບົດບາດຂອງບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງການພັດທະນາພື້ນຖານໂຄງລ່າງ ຮັບໃຊ້ການຜະລິດ ແລະ ການດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າ ໃນເຂດຊົນນະບົດ ພ້ອມທັງສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ປະຈຳເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ, 01 ປີ, ກາງສະໄໝ ແລະ 05 ປີ ເພື່ອລາຍງານໃຫ້ຂັ້ນຄະນະກົມ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;

7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການສ້າງແຜນການ, ແຜນງົບປະມານການລົງທຶນ ເຂົ້າໃສ່ການພັດທະນາພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ການດໍາລົງຊີວິດຂອງປະຊາຊົນ ໃນເຂດຊົນນະບົດ ເພື່ອນໍາສະເໜີລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ພິຈາລະນາ ພ້ອມທັງເປັນໃຈກາງປະສານງານ, ຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ອື່ນໆ ເພື່ອປະເມີນຜົນ ແລະ ສະຫລຸບ, ລາຍງານ ການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ;
8. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ຈັດລຽງບູລິມະສິດ, ຈັດສັນທຶນ ແລະ ດັດແກ້ທຶນໂຄງການທີ່ຈັດຕັ້ງປະຕິບັດຢູ່ຈຸດສຸມຂອງສູນກາງ ເພື່ອນໍາສະເໜີກະຊວງການເງິນ ພິຈາລະນາ;
9. ເປັນໃຈກາງສະຫຼຸບ, ສັງລວມ ສະພາບການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ, ວຽກງານແກ້ໄຂຄວາມທຸກຍາກ, ວຽກງານຈັດສັນພູມລໍາເນົາ ແລະ ອາຊີບ, ວຽກງານກອງທຶນພັດທະນາບ້ານ, ແລະ ວຽກງານສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ຕິດພັນກັບວຽກງານ 3 ສ້າງ, ສະພາບການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າ ແລະ ໂຄງການກູ້ຢືມ ເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນທົ່ວປະເທດ ເປັນປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, 1 ປີ, ກາງສະໄໝ ແລະ 5 ປີ ເພື່ອລາຍງານຄະນະກົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ທັນກັບເວລາ;
10. ຄົ້ນຄວ້າ, ນໍາສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກໍານົດຕໍາແໜ່ງງານໃຫ້ຄົບຖ້ວນ, ຄຸ້ມຄອງພະນັກງານ-ລັດຖະກອນ, ຕິດຕາມ, ກວດກາ, ປະເມີນຜົນ, ສະເໜີບັນຈຸ-ສັບຊ້ອນ, ຍົກຍ້າຍ, ເລື່ອນຊັ້ນ-ຂັ້ນ ເງິນເດືອນ; ນໍາສະເໜີປະຕິບັດນະໂຍບາຍ ຍ້ອງຍໍ-ຊົມເຊີຍ ຕໍ່ພະນັກງານ-ລັດຖະກອນ ຜູ້ທີ່ມີຜົນງານ ແລະ ລົງວິໄນຕໍ່ພະນັກງານ-ລັດຖະກອນ ຜູ້ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ; ສ້າງແຜນການບໍາລຸງກໍ່ສ້າງພະນັກງານ-ລັດຖະກອນຂອງຕົນ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ ໂດຍປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ໄດ້ກໍານົດໄວ້; ປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງບໍລິຫານຂອງກົມ ໃຫ້ມີປະສິດທິພາບ;
11. ປະສານສົມທົບກັບບັນດາພະແນກ, ໂຄງການ ພາຍໃນກົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງງົບປະມານ ເປັນຕົ້ນ ພາກ 60, 61, 62, 63, 67 ແລະ ຄຸ້ມຄອງຊັບສິນຂອງລັດ ທີ່ນອນໃນຄວາມຮັບຜິດຊອບຂອງກົມ; ຂຶ້ນແຜນບໍາລຸງຮັກສາ, ສ້ອມແປງ ສໍານັກງານຫ້ອງການ, ຈັດຊື້-ຈັດຈ້າງພາຫະນະ, ວັດຖຸ, ອຸປະກອນເຄື່ອງຮັບໃຊ້ຫ້ອງການ, ການບໍາລຸງຮັກສາ ແລະ ກໍ່ສ້າງ ຫ້ອງການ-ອາຄານສະຖານທີ່ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງຕົນ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
12. ຄຸ້ມຄອງເອກະສານ ຂາເຂົ້າ-ຂາອອກ, ການຈໍລະຈອນເອກະສານ, ຈັດເກັບຮັກສາເອກະສານທາງລັດຖະການ ແລະ ຄຸ້ມຄອງຕາປະທັບຂອງກົມ;
13. ຕິດຕາມ, ເກັບກໍາຂ່າວ ການເຄື່ອນໄຫວວຽກງານຕ່າງໆ ຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ມາຜະລິດເປັນສື່, ສິ່ງພິມດ້ວຍຫຼາຍຮູບແບບ ເພື່ອໂຄສະນາເຜີຍແຜ່ ຂໍ້ມູນຂ່າວສານ ອອກສູ່ສັງຄົມ ຢ່າງກວ້າງຂວາງ;
14. ເປັນເຈົ້າການປະສານສົມທົບບັນດາຂະແໜງການທີ່ກ່ຽວຂ້ອງ ກະກຽມຈັດກອງປະຊຸມ, ຝຶກອົບຮົມ, ສໍາມະນາ, ກະກຽມພົບປະເຈລະຈາ, ພິທີເຊັນສັນຍາຕ່າງໆ, ເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງໃຫ້ພະນັກງານຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ກໍຄືນັກພັດທະນາກອນ ເພື່ອຮຽນຮູ້ ແລະ ນໍາພາປະຊາຊົນເຮັດຕົວຈິງຢູ່ ທ້ອງຖິ່ນ ແລະ ບັນດາຈຸດສຸມ ໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍຕິດພັນສະໜິດແໜ້ນກັບຂະບວນການຜະລິດເປັນສິນຄ້າ ເພື່ອສ້າງອາ ຊີບ ແລະ ສ້າງລາຍຮັບ ທີ່ໝັ້ນຄົງ;

15. ຄົ້ນຄວ້າ, ສັງລວມ, ວິເຄາະ-ວິໄຈ ຂໍ້ມູນ ແລະ ເນື້ອໃນເອກະສານຕ່າງໆ ໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອນຳສະເໜີຄະນະກົມພິຈາລະນາ; ກະກຽມສະຖານທີ່, ພິທີການ ໃຫ້ແກ່ກອງປະຊຸມຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ; ເຂົ້າຮ່ວມຕິດຕາມ ແລະ ບັນທຶກກອງປະຊຸມ, ການພົບປະ ແລະ ການເຄື່ອນໄຫວຕ່າງໆ ຂອງຄະນະກົມ ພ້ອມທັງເປັນໃຈກາງໃນການຈັດຕັ້ງຜັນຂະຫຍາຍ ຢ່າງຖືກຕ້ອງ ແລະ ທັນການ;
16. ເປັນກອງເລຂາວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມຄວາມຮັບຜິດຊອບວຽກງານ ແລະ ການຕົກລົງມອບໝາຍ ຂອງຄະນະກົມ ແລະ ຂັ້ນເທິງ;
17. ປະກອບສ່ວນເຂົ້າໃນການພັດທະນາບັນດາວິທະຍາໄລກະສິກຳ ແລະ ສິ່ງແວດລ້ອມ ແລະ ໂຮງຮຽນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃຫ້ມີຄວາມເຂັ້ມແຂງ; ຫັນກິດຈະກຳໂຄງການ, ງົບປະມານ, ເຕັກນິກວິຊາການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ລົງສູ່ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະກອບສ່ວນສ້າງສູນ, ສະຖານີ ດັ່ງກ່າວໃຫ້ມີຄວາມເຂັ້ມແຂງ;
18. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການກະກຽມ ແລະ ຈັດກອງປະຊຸມວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ປະຈຳປີ ໃນທົ່ວປະເທດ;
19. ເປັນໃຈກາງປະສານງານວຽກງານປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນກົມ; ປ້ອງກັນສະຖານທີ່, ປ້ອງກັນຊັບສິນ, ປ້ອງກັນບຸກຄະລາກອນ ແລະ ປ້ອງກັນລະບົບຄວາມປອດໄພຖານຂໍ້ມູນຕ່າງໆ;
20. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ແລະ ກົມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
21. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກຮ່ວມມື**

ພະແນກຮ່ວມມື ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການ ສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ສ້າງ ແລະ ນຳສະເໜີ ບັນດານະໂຍບາຍສົ່ງເສີມ ເພື່ອລະດົມທຶນ, ຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິຊາການ ແລະ ບົດຮຽນຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂອງບັນດາກະຊວງ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາຊົນນະບົດຮອບດ້ານ ຕາມພາລະບົດບາດຂອງບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງການພັດທະນາພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ການດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າ ໃນເຂດຊົນນະບົດ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຊຸກຍູ້ການສ້າງແຜນການ ແລະ ໂຄງການ ເພື່ອພັດທະນາພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ການດຳລົງຊີວິດຂອງປະຊາຊົນ ໃນເຂດຊົນນະບົດ; ສ້າງແຜນການ ແລະ ໂຄງການ ພັດທະນາອາຊີບ ແລະ ປັບປຸງລະບົບການຈັດຕັ້ງການຜະລິດ ໃນ

ເຂດຊົນນະບົດ ເພື່ອນຳສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາ ພ້ອມທັງເປັນໃຈກາງປະສານງານ, ຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;

5. ປະສານງານກັບ ບັນດາກົມທີ່ກ່ຽວຂ້ອງ ຂອງຫ້ອງວ່າການສູນກາງພັກ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແຕ່ລະໄລຍະ;

6. ເປັນໃຈກາງປະສານສົມທົບ, ສ້າງເງື່ອນໄຂສະດວກ ແລະ ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອແນະນຳທາງດ້ານວິຊາການ ໃນການຄຸ້ມຄອງ, ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ຢ່າງມີປະສິດທິພາບ ພ້ອມທັງເກັບກຳຂໍ້ມູນ ແລະ ສະພາບການຕ່າງໆ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອສັງລວມລາຍງານຄະນະກົມ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ ຢ່າງຖືກຕ້ອງ ແລະ ທັນສະພາບການ;

7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ ໃນກອບການຮ່ວມມື ສອງຝ່າຍ, ຫຼາຍຝ່າຍ, ອາຊຽນ, ການຮ່ວມມື ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ, ຂະບວນການກອງປະຊຸມໂຕະມົນ, ອົງການຈັດຕັ້ງສາກົນ, ຜູ້ປະກອບການ ແລະ ອື່ນໆ ໃນວຽກງານພັດທະນາຊົນນະ ບົດ ແລະ ແກ້ໄຂຄວາມທຸກຍາກ;

8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຮ່າງ ສັນຍາ, ອານຸສັນຍາ, ບົດບັນທຶກຄວາມເຂົ້າໃຈ, ບົດບັນທຶກຊ່ວຍຈຳ, ເອກະສານໂຄງການຕ່າງໆ ຂອງຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ທີ່ຈະເຊັນສັນຍາ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບເອົາການຊ່ວຍເຫຼືອຕ່າງໆ ເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

9. ເກັບກຳຂໍ້ມູນ, ຕິດຕາມຜົນງານ ເພື່ອເປັນພື້ນຖານໃຫ້ແກ່ການສະເໜີຍ້ອງຍໍ ຊ່ຽວຊານ, ອາສາສະໝັກຂອງອົງການຈັດຕັ້ງສາກົນ, ສະຖາບັນການເງິນສາກົນ ແລະ ອົງການຈັດຕັ້ງສາກົນ (NGOs) ທີ່ມີຜົນງານດີເດັ່ນ ໃນການຂົນຂວາຍທຶນຊ່ວຍເຫຼືອ ເຂົ້າໃນການຈັດຕັ້ງປະຕິບັດບັນດາໂຄງການ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

10. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກະກຽມກອງປະຊຸມ ລະດັບພາກພື້ນ, ສາກົນ ແລະ ອື່ນໆ ກ່ຽວກັບວຽກພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການກະກຽມ ເອກະສານ ແລະ ຄວາມພ້ອມດ້ານຕ່າງໆ ໃນການເຜີຍແຜ່, ແນະນຳ ນະໂຍບາຍ, ກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ແກ່ຜູ້ປະ ກອບການ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນຕ່າງໆ ຕາມຄວາມຮັບຜິດຊອບ ຂອງກົມ;

11. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຂຽນບົດສະເໜີໂຄງການ ເພື່ອຂໍການຊ່ວຍເຫຼືອທາງດ້ານທຶນຮອນ ພ້ອມທັງຄຸ້ມຄອງ, ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນ ການນຳໃຊ້ທຶນຂອງຕ່າງ ປະເທດ, ອົງການຈັດຕັ້ງສາກົນ, ສະຖາບັນການເງິນ ແລະ ອົງການທີ່ບໍ່ສັງກັດລັດຖະບານ ທີ່ນຳໃຊ້ເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແລະ ສະຫຼຸບລາຍງານໃຫ້ການນຳກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;

12. ເປັນເຈົ້າການປະສານສົມທົບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ, ບັນດາຜູ້ໃຫ້ທຶນ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາຕ່າງໆ ຈັດກອງປະຊຸມປຶກສາຫາລືວຽກງານໃດໜຶ່ງ ແລະ ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ເປັນແຕ່ລະໄລຍະ ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານ ແລະ ຕາມລະບຽບຫຼັກການທີ່ກຳນົດໄວ້;

13. ເຮັດໜ້າທີ່ປະສານງານ ແລະ ພິທີການ ໃນການຈັດກອງປະຊຸມ, ການພົບປະເຈລະຈາ, ພິທີເຊັນສັນຍາ ຂອງກົມພັດທະນາຊົນນະບົດ ແລະ ຂະແໜງພັດທະນາຊົນນະບົດ ຂັ້ນທ້ອງຖິ່ນ ກັບບັນດາຜູ້ໃຫ້ທຶນ, ອົງການຈັດຕັ້ງສາກົນ ແລະ ອື່ນໆ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
14. ປະສານງານ ແລະ ກະກຽມວຽກງານຕ່າງໆ ຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຢູ່ຕ່າງປະເທດ ຂອງຄະນະກົມ, ການນໍາກະຊວງກະສິກໍາ ແລະ ສິ່ງແວດລ້ອມ ແລະ ຂະແໜງພັດທະນາຊົນນະບົດ ຂັ້ນທ້ອງຖິ່ນ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
15. ຊ່ວຍຄະນະກົມ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ກະກຽມກອງປະຊຸມລັດຖະມົນຕີ, ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ແລະ ກອງປະຊຸມອື່ນໆ ກ່ຽວກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແລະ ເປັນຈຸດປະສານງານວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກອາຊຽນ;
16. ເປັນກອງເລຂາໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມຄວາມຮັບຜິດຊອບວຽກງານ ແລະ ຕາມການຕົກລົງມອບໝາຍ ຂອງຄະນະກົມ ແລະ ຂັ້ນເທິງ;
17. ຄົ້ນຄວ້າ, ເກັບກໍາຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈໍາປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
18. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງພະແນກພັດທະນາຊົນນະບົດ**

ພະແນກພັດທະນາຊົນນະບົດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກໍາ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະ ຂອງຕົນພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ຄົ້ນຄວ້າ, ນໍາສະເໜີ ສ້າງ, ປັບປຸງ ນະໂຍບາຍ, ນິຕິກໍາ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານພັດທະນາຊົນນະບົດຮອບດ້ານ ແລະ ຄົ້ນຄວ້າ, ສ້າງ ນະໂຍບາຍ ແລະ ມາດຕະການ ສົ່ງເສີມເປັນພິເສດ ເພື່ອຊຸກຍູ້ໃຫ້ ຜູ້ລົງທຶນ ຫຼື ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໄປລົງທຶນໂຄງການຕ່າງໆ ທີ່ຕິດພັນກັບການພັດທະນາຊົນນະບົດ ຢູ່ເຂດທີ່ທຸກຍາກ-ຫ່າງໄກສອກຫຼີກ, ທຸລະກັນດານ, ເຂດທີ່ໝັ້ນການປະຕິວັດ, ເຂດບ້ານເມືອງວີລະຊົນ ເພື່ອສະເໜີຄະນະກົມ ພິຈາລະນາ;
3. ຄົ້ນຄວ້າ, ຈັດລຽງບຸລິມະສິດ ແລະ ສັງລວມ ບັນດາໂຄງການທີ່ສະເໜີບັນຈຸເຂົ້າແຜນການລົງທຶນຂອງລັດໃນແຕ່ລະປີ ແລະ ສະເໜີດັດແກ້ທຶນໂຄງການພັດທະນາໃນເຂດຊົນນະບົດ ເພື່ອສະເໜີຄະນະກົມ ແລະ ຂັ້ນເທິງພິຈາລະນາ; ປະສານສົມທົບ, ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນງານ, ແຜນການ, ໂຄງການ ດັ່ງກ່າວ ຢູ່ບັນດາແຂວງ, ເມືອງ, ບ້ານ ແລະ ຈຸດສຸມພັດທະນາຊົນນະບົດໃໝ່, ຈຸດສຸມສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ແລະ ຈຸດສຸມອື່ນໆ ເພື່ອສະຫຼຸບສັງລວມລາຍງານຄະນະກົມ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ;
4. ປະສານສົມທົບ, ຕິດຕາມ, ຊຸກຍູ້ ແລະ ສັງລວມລາຍງານ ການຈັດຕັ້ງປະຕິບັດມາດຕະຖານ ແລະ ຕົວຊີ້ວັດແຫ່ງຊາດ ກ່ຽວກັບການພັດທະນາຊົນນະບົດໃໝ່ ເປັນຕົ້ນ: ມາດຕະຖານການສ້າງຄອບຄົວພັດທະນາ, ການສ້າງບ້ານພັດທະນາ, ການສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ, ການສ້າງເມືອງເຂັ້ມແຂງຮອບດ້ານ ເພື່ອລາຍງານຄະນະກົມ ແລະ ຂັ້ນເທິງເປັນແຕ່ລະໄລຍະ;
5. ຄົ້ນຄວ້າ, ສະເໜີ ກໍານົດຈຸດສຸມພັດທະນາຊົນນະບົດ ໃນແຕ່ລະໄລຍະ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ເປັນຕົ້ນ ຈຸດສຸມສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ແລະ ຈຸດສຸມອື່ນໆ

ໃຫ້ເປັນເອກະພາບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ເພື່ອສະເໜີຄະນະກຳມະ ແລະ ຂັ້ນເທິງ ພິຈາລະນາ; ປະສານສົມທົບ ແລະ ຊຸກຍູ້ ການສ້າງເປັນແຜນງານ, ແຜນການ ແລະ ໂຄງການ ໃຫ້ຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ສຸມໃສ່ພັດທະນາ ພ້ອມທັງຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;

6. ຄົ້ນຄວ້າ, ສະເໜີ, ກຳນົດ ຄາດໝາຍ ແລະ ເປົ້າໝາຍ ໃນການສ້າງຄອບຄົວພັດທະນາ, ການສ້າງບ້ານພັດທະນາ, ການສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ, ການສ້າງເມືອງເຂັ້ມແຂງຮອບດ້ານ ເພື່ອສະເໜີຄະນະກຳມະ ແລະ ຂັ້ນເທິງພິຈາລະນາ ພ້ອມທັງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຕິດຕາມ, ຊຸກຍູ້ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;
7. ຕິດຕາມ, ຊຸກຍູ້, ສັງລວມ, ລາຍງານ ແລະ ສະເໜີ ຂັ້ນເທິງພິຈາລະນາ ຮັບຮອງ ແລະ ປະກາດເປັນທາງການ ກ່ຽວກັບຄອບຄົວພັດທະນາ, ບ້ານພັດທະນາ, ບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ, ເມືອງເຂັ້ມແຂງຮອບດ້ານ ທີ່ບັນລຸມາດຕະຖານ ຕາມຂັ້ນຄຸ້ມຄອງ;
8. ປະສານສົມທົບກັບບັນດາຂະແໜງການກ່ຽວຂ້ອງ ພາກລັດ ແລະ ຜູ້ປະກອບການ ເພື່ອຊຸກຍູ້, ສົ່ງເສີມສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນການຜະລິດເປັນສິນຄ້າ, ການເຂົ້າເຖິງແຫຼ່ງທຶນ, ການເຂົ້າເຖິງຕະຫຼາດ, ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ໃຫ້ປະຊາຊົນ ໃນການພັດທະນາອາຊີບ, ປັບປຸງລະບົບການຈັດຕັ້ງການຜະລິດ, ສົ່ງເສີມ ແລະ ສ້າງໂອກາດ ໃຫ້ແມ່ຍິງ-ເດັກນ້ອຍ ເຂດຊົນນະບົດ, ຈຸດສຸມພັດທະນາຊົນນະບົດໃໝ່, ເປົ້າໝາຍສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ແລະ ຈຸດສຸມອື່ນໆ;
9. ຈັດຝຶກອົບຮົມ, ເຜີຍແຜ່ບົດຮຽນຕົວແບບ ໃນການສ້າງຄອບຄົວ, ບ້ານ, ນັກພັດທະນາກອນ ແລະ ຜູ້ປະກອບການດີເດັ່ນ ກ່ຽວກັບການພັດທະນາຊົນນະບົດ ເພື່ອແລກປ່ຽນບົດຮຽນ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງດຳເນີນການຈັດຕັ້ງຜັນຂະຫຍາຍອອກ ຢ່າງກວ້າງຂວາງ;
10. ເປັນກອງເລຂາໃນວຽກງານພັດທະນາຊົນນະບົດ ຕາມຄວາມຮັບຜິດຊອບວຽກງານ ແລະ ຕາມການຕົກລົງມອບໝາຍ ຂອງຄະນະກຳມະ ແລະ ຂັ້ນເທິງ;
11. ສະຫຼຸບ, ສັງລວມ, ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ປະຈຳເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ, 01 ປີ, ກາງສະໄໝ ແລະ 05 ປີ ເພື່ອລາຍງານໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພະແນກແກ້ໄຂຄວາມທຸກຍາກ**

ພະແນກແກ້ໄຂຄວາມທຸກຍາກ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າ, ນຳສະເໜີ, ປັບປຸງນະໂຍບາຍ, ນິຕິກຳ ແລະ ລະບຽບການຕ່າງໆ ເພື່ອສົ່ງເສີມ ແລະ ສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກ ໃຫ້ແກ່ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໄປລົງທຶນໃນໂຄງການຕ່າງໆ ທີ່ຕິດພັນກັບການແກ້ໄຂຄວາມທຸກຍາກ ຢູ່ໃນເຂດຊົນນະບົດ, ຫ່າງໄກສອກຫຼີກ ແລະ ຢູ່ຕາມຈຸດສຸມຕ່າງໆ;
3. ຄົ້ນຄວ້າ, ຈັດລຽງບຸລິມະສິດ ແລະ ສັງລວມ ບັນດາໂຄງການທີ່ສະເໜີບັນຈຸເຂົ້າແຜນການລົງທຶນຂອງລັດ ໃນແຕ່ລະປີ ແລະ ສະເໜີດັດແກ້ທຶນໂຄງການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ເພື່ອສະເໜີຄະນະກຳມະ

ແລະ ຂັ້ນເທິງພິຈາລະນາ; ປະສານສົມທົບ, ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນງານ, ແຜນການ, ໂຄງການດັ່ງກ່າວ ຢູ່ບັນດາແຂວງ, ເມືອງ, ບ້ານ ແລະ ຈຸດສຸມ ເພື່ອສະຫຼຸບສັງລວມລາຍງານຄະນະກຳມະ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ;

4. ປະສານສົມທົບ, ຕິດຕາມ, ຊຸກຍູ້ ແລະ ສັງລວມລາຍງານ ການຈັດຕັ້ງປະຕິບັດມາດຕະຖານ ແລະ ຕົວຊີ້ວັດແຫ່ງຊາດ ກ່ຽວກັບການພັດທະນາຊົນນະບົດໃໝ່ ເປັນຕົ້ນ: ມາດຕະຖານການສ້າງຄອບຄົວພົ້ນທຸກ, ບ້ານພົ້ນທຸກ, ເມືອງພົ້ນທຸກ ເພື່ອລາຍງານຄະນະກຳມະ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ;

5. ຄົ້ນຄວ້າ, ສະເໜີ ກຳນົດຈຸດສຸມການແກ້ໄຂຄວາມທຸກຍາກ ໃນແຕ່ລະໄລຍະ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ເປັນເອກະພາບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ເພື່ອສະເໜີຄະນະກຳມະ ແລະ ຂັ້ນເທິງພິຈາລະນາ; ປະສານສົມທົບ, ຊຸກຍູ້ການສ້າງເປັນແຜນງານ, ແຜນການ ແລະ ໂຄງການ ໃຫ້ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ສຸມໃສ່ພັດທະນາ ພ້ອມທັງຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;

6. ຄົ້ນຄວ້າ, ສະເໜີ ກຳນົດຄາດໝາຍ ແລະ ເປົ້າໝາຍ ໃນການສ້າງຄອບຄົວພົ້ນທຸກ, ບ້ານພົ້ນທຸກ, ເມືອງພົ້ນທຸກ ເພື່ອສະເໜີຄະນະກຳມະ ແລະ ຂັ້ນເທິງພິຈາລະນາ ພ້ອມທັງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຕິດຕາມ, ຊຸກຍູ້ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ;

7. ຕິດຕາມ, ຊຸກຍູ້, ສັງລວມ, ລາຍງານ ແລະ ສະເໜີຂັ້ນເທິງພິຈາລະນາ ຮັບຮອງ ແລະ ປະກາດເປັນທາງການກ່ຽວກັບ ຄອບຄົວພົ້ນທຸກ, ບ້ານພົ້ນທຸກ, ເມືອງພົ້ນທຸກ ທີ່ບັນລຸມາດຕະຖານ ຕາມຂັ້ນຄຸ້ມຄອງ;

8. ເປັນເຈົ້າການ ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດບັນດາໂຄງການຫຼຸດຜ່ອນຄວາມທຸກຍາກ, ການປ່ອຍສິນເຊື່ອ ຂອງທະນາຄານ, ກອງທຶນພັດທະນາບ້ານ, ສະຖາບັນການເງິນຈຸລະພາກ ແລະ ກອງທຶນອື່ນໆ ທີ່ຕິດພັນກັບການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ເພື່ອສັງລວມລາຍງານຄະນະກຳມະ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ;

9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການສົ່ງເສີມການຜະລິດ, ການສ້າງວຽກເຮັດງານທຳໃຫ້ຄອບຄົວທຸກຍາກ, ການສ້າງຄອບຄົວຕົວແບບດ້ານຕ່າງໆຢູ່ເຂດຊົນນະບົດ ໃຫ້ກວ້າງຂວາງ ເພື່ອເປັນບ່ອນຮຽນຮູ້ ແລະ ຖອດຖອນບົດຮຽນ;

10. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານກອງທຶນພັດທະນາຂັ້ນບ້ານຢູ່ເມືອງທຸກຍາກ (ບ້ວງ 500 ລ້ານກີບ) ໃຫ້ເຄື່ອນໄຫວໄປຕາມນິຕິກຳທີ່ກຳນົດໄວ້ ພ້ອມທັງສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ຄະນະກຳມະ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ;

11. ຈັດຝຶກອົບຮົມ, ເຜີຍແຜ່ບົດຮຽນຕົວແບບໃນການສ້າງຄອບຄົວ, ບ້ານ, ນັກພັດທະນາກອນ ແລະ ຜູ້ປະກອບການດີເດັ່ນ ກ່ຽວກັບການແກ້ໄຂຄວາມທຸກຍາກ ເພື່ອແລກປ່ຽນບົດຮຽນ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງດຳເນີນການຈັດຕັ້ງພັນຂະຫຍາຍອອກຢ່າງກວ້າງຂວາງ;

12. ເປັນກອງເລຂາໃນວຽກງານແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ຕາມຄວາມຮັບຜິດຊອບວຽກງານ ແລະ ຕາມການຕົກລົງມອບໝາຍ ຂອງຄະນະກຳມະ ແລະ ຂັ້ນເທິງ;

13. ສະຫຼຸບ, ສັງລວມ, ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ປະຈຳເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ, 01 ປີ, ກາງສະໄໝ ແລະ 05 ປີ ເພື່ອລາຍງານໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;

14. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 11 ໜ້າທີ່ ຂອງພະແນກຈັດສັນພູມລຳເນົາ ແລະ ອາຊີບ**

ພະແນກຈັດສັນພູມລຳເນົາ ແລະ ອາຊີບ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະ ຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ຄົ້ນຄວ້າ, ນຳສະເໜີ ສ້າງ, ປັບປຸງ ນະໂຍບາຍ, ນິຕິກຳ, ລະບຽບການ, ຫົວໜ່ວຍການທົດແທນຄ່າເສຍຫາຍ, ໄລຍະເວລາການພັດທະນາເຂດຈັດສັນ, ໄລຍະຂ້າມຜ່ານ ແລະ ການຟື້ນຟູຊີວິດການເປັນຢູ່ ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການ; ຄົ້ນຄວ້າ, ສ້າງ ນະໂຍບາຍ ແລະ ມາດຕະການ ສົ່ງເສີມເປັນພິເສດ ເພື່ອຊຸກຍູ້ໃຫ້ຜູ້ລົງທຶນ ຫຼື ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໄປລົງທຶນໂຄງການຕ່າງໆ ທີ່ຕິດພັນກັບການຈັດສັນພູມລຳເນົາ ແລະ ອາຊີບ ເພື່ອສະເໜີຄະນະກົມ ພິຈາລະນາ;
3. ຄົ້ນຄວ້າ, ກຳນົດຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ ຂອງສູນກາງ ແລະ ທ້ອງຖິ່ນ (ຈຸດຍົກຍ້າຍປະຊາຊົນ, ຈຸດເຕົ້າໂຮມ), ຈຸດຈັດສັນສະເພາະ ແຕ່ລະໄລຍະ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ເປັນເອກະພາບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ເພື່ອສະເໜີຄະນະກົມ ແລະ ຂັ້ນເທິງ ພິຈາລະນາ;
4. ຄົ້ນຄວ້າ, ສັງລວມ ສ້າງແຜນການ, ແຜນງານ, ໂຄງການຈັດສັນພູມລຳເນົາ ແລະ ການຈັດສັນອາຊີບ ຕາມປະເພດ ຂອງການຈັດສັນພູມລຳເນົາ ແລະ ອາຊີບ ເພື່ອນຳສະເໜີຄະນະກົມ ແລະ ຂັ້ນເທິງ ພິຈາລະນາ; ຄົ້ນຄວ້າ, ຈັດລຽງບຸລິມະສິດ ແລະ ສັງລວມ ບັນດາໂຄງການທີ່ສະເໜີບັນຈຸເຂົ້າແຜນການລົງທຶນ ຂອງລັດໃນແຕ່ລະປີ ແລະ ການສະເໜີດັດແກ້ທຶນໂຄງການຈັດສັນພູມລຳເນົາ, ບ່ອນທຳມາຫາກິນ ແລະ ອາຊີບ ຂອງປະຊາຊົນ ເພື່ອສະເໜີຄະນະກົມ ແລະ ຂັ້ນເທິງ ພິຈາລະນາ ພ້ອມທັງປະສານສົມທົບ, ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການດັ່ງກ່າວ ຢູ່ບັນດາແຂວງ, ເມືອງ, ບ້ານ ແລະ ຈຸດສຸມ ເພື່ອສະຫຼຸບສັງລວມລາຍງານຄະນະກົມ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ;
5. ຄົ້ນຄວ້າ, ສະເໜີ ກຳນົດຄາດໝາຍ ແລະ ເປົ້າໝາຍ ໃນການຈັດສັນພູມລຳເນົາ, ຈັດສັນເຂດທຳການຜະລິດ, ບ່ອນທຳມາຫາກິນ ແລະ ການຈັດສັນອາຊີບທີ່ໝັ້ນຄົງຖາວອນໃຫ້ປະຊາຊົນ ເພື່ອລາຍງານຄະນະກົມ ແລະ ຂັ້ນເທິງພິຈາລະນາ ພ້ອມທັງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຕິດຕາມ, ຊຸກຍູ້ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;
6. ສັງລວມ, ເກັບກຳຂໍ້ມູນ ແລະ ຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນ ໃຫ້ປະຊາຊົນໃນເຂດເປົ້າໝາຍຍົກຍ້າຍ ແລະ ເຂດແກ້ໄຂບັນຫາການເຄື່ອນຍ້າຍ ຂອງພົນລະເມືອງແບບຊະຊາຍ, ດຸ່ນດ່ຽງປະຊາກອນ ຫຼື ກຳລັງແຮງງານກັບພື້ນທີ່ ຕາມຂັ້ນຕອນການຈັດສັນພູມລຳເນົາ ແລະ ອາຊີບ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ; ເກັບກຳ, ສັງລວມ ແລະ ຮັກສາຂໍ້ມູນ ຂອງຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມ ກ່ຽວກັບໂຄງການພັດທະນາ;
7. ຕິດຕາມ, ເກັບກຳ ສະພາບການເຄື່ອນຍ້າຍຕັ້ງພູມລຳເນົາແບບຊະຊາຍ ຂອງພົນລະເມືອງໃນທົ່ວປະເທດ ເປັນຕົ້ນ ເຂດທຸລະກັນດານ ແລະ ບໍ່ມີເງື່ອນໄຂໃນການພັດທະນາ, ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ, ເຂດທີ່ມີລັກສະນະພິເສດ ແລະ ເຂດທີ່ຖືກໂຄງການພັດທະນາ ແລະ ເຂດອື່ນໆ ໃຫ້ໄປຕາມຈຸດສຸມ ແລະ ຖືກຕ້ອງສອດຄ່ອງ ຕາມມາດຕະຖານ, ລະບຽບການທີ່ກຳນົດໄວ້ ພ້ອມທັງຄົ້ນຄວ້າ, ວາງມາດຕະ ການ ເພື່ອຄຸ້ມຄອງ ແລະ ແກ້ໄຂຊີວິດການເປັນຢູ່, ສ້າງອາຊີບໝັ້ນຄົງໃຫ້ປະຊາຊົນ;
8. ເປັນເຈົ້າການຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດໂຄງການພັດທະນາຕ່າງໆ ຢູ່ຈຸດສຸມຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນ ໃຫ້ປະຊາຊົນບັນດາເຜົ່າ ຂອງສູນກາງ ແລະ ທ້ອງຖິ່ນ ໃຫ້ດຳເນີນໄປຕາມກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ມີປະສິດທິຜົນ;
9. ປະສານສົມທົບກັບບັນດາຂະແໜງການກ່ຽວຂ້ອງ ພາກລັດ ແລະ ຜູ້ປະກອບການ ເພື່ອຊຸກຍູ້, ສົ່ງເສີມສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃນການຜະລິດເປັນສິນຄ້າ, ການເຂົ້າເຖິງແຫຼ່ງທຶນ, ການເຂົ້າເຖິງ

ຕະຫຼາດ, ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ໃຫ້ປະຊາຊົນ ໃນການພັດທະນາອາຊີບ, ປັບປຸງລະບົບການຈັດຕັ້ງການຜະລິດ, ສົ່ງເສີມ ແລະ ສ້າງໂອກາດໃຫ້ແມ່ຍິງ-ເດັກນ້ອຍ ເຂດຈັດສັນພູມລໍາເນົາ ແລະ ອາຊີບ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກໍານົດໄວ້;

10. ເປັນກອງເລຂາວຽກງານຈັດສັນພູມລໍາເນົາ ແລະ ອາຊີບ ຕາມຄວາມຮັບຜິດຊອບວຽກງານ ແລະ ຕາມການຕົກລົງມອບໝາຍ ຂອງຄະນະກົມ ແລະ ຂັ້ນເທິງ;
11. ສະຫຼຸບ, ສັງລວມ, ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ປະຈໍາເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ, 01 ປີ, ກາງສະໄໝ ແລະ 05 ປີ ເພື່ອລາຍງານໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງພະແນກມາດຕະຖານ ແລະ ປະເມີນຜົນ**

ພະແນກມາດຕະຖານ ແລະ ປະເມີນຜົນ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກໍາ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ຄົ້ນຄວ້າ ນໍາສະເໜີ ສ້າງ, ປັບປຸງ ນະໂຍບາຍ, ນິຕິກໍາ, ລະບຽບການ, ມາດຕະຖານ, ຕົວຊີ້ວັດແຫ່ງຊາດກ່ຽວກັບ ການພັດທະນາຊົນນະບົດໃໝ່ ເປັນຕົ້ນ ມາດຕະຖານຄອບຄົວພົ້ນທຸກ ແລະ ພັດທະນາ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານຕາມທິດ 03 ສ້າງ; ຄົ້ນຄວ້າຮ່າງຄູ່ມືແນະນໍາ ແລະ ກົນໄກວິທີການຕ່າງໆ ກ່ຽວກັບ ການປະເມີນຜົນການພົ້ນທຸກ ແລະ ການພັດທະນາ;
3. ຄົ້ນຄວ້າ ນໍາສະເໜີ ກໍານົດມາດຕະຖານ ແລະ ຕົວຊີ້ວັດແຫ່ງຊາດ ກ່ຽວກັບ ວຽກງານພັດທະນາຊົນນະບົດໃໝ່ (ມາດຕະຖານຄອບຄົວພົ້ນທຸກ ແລະ ພັດທະນາ, ມາດຕະຖານບ້ານພົ້ນທຸກ ແລະ ບ້ານພັດທະນາ, ມາດຕະຖານບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ມາດຕະຖານເມືອງພົ້ນທຸກ ແລະ ເມືອງເຂັ້ມ ແຂງຮອບດ້ານ) ຕາມທິດ 03 ສ້າງ, ຈັດຕັ້ງການປະເມີນການພົ້ນທຸກ ແລະ ພັດທະນາ ຕາມມາດຕະຖານທີ່ກໍານົດໄວ້ ເປັນແຕ່ລະໄລຍະ ໃຫ້ຖືກຕ້ອງ ຕາມລະບຽບການ ພ້ອມທັງວິເຄາະ, ວິໄຈ, ສັງລວມເຂົ້າລະບົບຖານຂໍ້ມູນ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອນໍາສະເໜີຕໍ່ຂັ້ນເທິງ ພິຈາລະນາຮັບຮອງ ແລະ ປະກາດໃຊ້ເປັນແຕ່ລະໄລຍະ 01 ປີ, 03 ປີ ແລະ 05 ປີ;
4. ຄົ້ນຄວ້າ, ມີຄໍາເຫັນຢັ້ງຢືນ ຕໍ່ການສະເໜີຂໍອະນຸມັດຢັ້ງຢືນ ແລະ ຮັບຮອງ ເມືອງບໍ່ພົ້ນທຸກເປັນເມືອງພົ້ນທຸກ, ເມືອງພົ້ນທຸກເປັນເມືອງເຂັ້ມແຂງຮອບດ້ານ ຂອງທ້ອງຖິ່ນ;
5. ສ້າງ, ພັດທະນາ, ຄຸ້ມຄອງ ເຊື່ອມໂຍງ ລະບົບຖານຂໍ້ມູນ; ສະໜອງ, ນໍາໃຊ້ ແລະ ເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບການພົ້ນທຸກ ແລະ ພັດທະນາ ໃຫ້ເຂົ້າເຖິງສະດວກ, ທັນການ ແລະ ທົ່ວເຖິງ;
6. ຈັດຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງ ກ່ຽວກັບການປະເມີນການພົ້ນທຸກ ແລະ ການພັດທະນາ, ປະເມີນຜົນການພັດທະນາຈຸດສຸມບຸລິມະສິດ, ກອງທຶນພັດທະນາບ້ານ, ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA), ໂຄງການກູ້ຢືມຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ທີ່ຂຶ້ນກັບກົມພັດທະນາຊົນນະບົດ ເປັນແຕ່ລະໄລຍະ 01 ປີ, 03 ປີ ແລະ 05 ປີ;
7. ເປັນກອງເລຂາໃນວຽກງານຄົ້ນຄວ້າກໍານົດມາດຕະຖານ ແລະ ປະເມີນຜົນ ຕາມຄວາມຮັບຜິດຊອບວຽກງານ ແລະ ຕາມການຕົກລົງມອບໝາຍ ຂອງຄະນະກົມ ແລະ ຂັ້ນເທິງ;
8. ສະຫຼຸບ, ສັງລວມ, ລາຍງານ ການຈັດຕັ້ງປະຕິບັດວຽກງານມາດຕະຖານ ແລະ ປະເມີນຜົນ ເພື່ອລາຍງານໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
9. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 13 ຫຼັກການ

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 05 ປີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 14 ແບບແຜນວິທີເຮັດວຽກ

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍ ຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ-ຄະນະນຳ ແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການ ແຕ່ລະໄລຍະ;
4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງ ຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າກົມ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍຂອງຫົວໜ້າກົມ;
5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດ ໃຫ້ຮອງຫົວໜ້າກົມທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກົມຊາບ ເປັນລາຍລັກອັກສອນ ພາຍຫຼັງຫົວໜ້າກົມ ກັບມາປະຈຳການ;
6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 15 ງົບປະມານ ແລະ ຕາປະທັບ**

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ມີງົບປະມານ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຂະແໜງສາຍຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມພັດທະນາຊົນນະບົດ ສະບັບເລກທີ 3694/ກປ, ລົງວັນທີ 23 ສິງຫາ 2023.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ລັດຖະມົນຕີ

**ປອ. ລິນຄຳ ດວງສະຫວັນ**